**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 24 / **ສພຊ**

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

# ມະຕິ
## ກອງປະຊຸມສະພາແຫ່ງຊາດ
## ວ່າດ້ວຍ ການຮັບຮອງເອົາ ບົດລາຍງານຜົນການກວດກາຕາມຜົນການກວດສອບ ປະຈໍາປີ 2019, ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈໍາປີ 2021 ແລະ ທິດທາງແຜນການ ປະຈໍາປີ 2022 ຂອງອົງການກວດກາແຫ່ງລັດ

- ອີງຕາມ ລັດຖະທໍາມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 มิຖຸນາ 2020 ມາດຕາ 12 ຂໍ້ 1.4 ແລະ ມາດຕາ 59 ຂໍ້ 3;
- ອີງຕາມ ກົດໝາຍວ່າດ້ວຍ ການກວດກາລັດ ສະບັບເລກທີ 41/ສພຊ, ລົງວັນທີ 16 ພະຈິກ 2017;
- ອີງຕາມ ບົດລາຍງານຂອງອົງການກວດກາແຫ່ງລັດ ສະບັບເລກທີ 137/ອກຫລ ແລະ 138/ອກຫລ, ລົງວັນທີ 9 ພະຈິກ 2021.

ຜ່ານການຄົ້ນຄວ້າ ຢ່າງເລິກເຊິ່ງ ແລະ ກວ້າງຂວາງ ຕໍ່ບົດລາຍງານຜົນການກວດກາຕາມຜົນກວດສອບ ປະຈໍາປີ 2019, ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈໍາປີ 2021 ແລະ ທິດທາງແຜນການ ປະຈໍາປີ 2022 ຂອງອົງການກວດກາແຫ່ງລັດ, ໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ວາລະກອງປະຊຸມ ວັນທີ 5 ພະຈິກ 2021.

## ກອງປະຊຸມຕົກລົງ:

**ມາດຕາ 1** ຮັບຮອງເອົາ ບົດລາຍງານຜົນການກວດກາຕາມຜົນການກວດສອບ ປະຈໍາປີ 2019 ແລະ ການຕິດຕາມ, ຊຸກຍູ້ ການແກ້ໄຂຜົນການກວດກາ ຕາມຜົນການກວດສອບ

ກອງປະຊຸມສະແດງຄວາມຊົມເຊີຍ ຕໍ່ອົງການກວດກາແຫ່ງລັດ ທີ່ໄດ້ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍ, ແຕ່ເຫັນວ່າ ອົງການກວດກາແຫ່ງລັດ ບໍ່ສາມາດດໍາເນີນການກວດກາຕາມແຜນການກວດກາຕາມຜົນການກວດສອບ ປະຈໍາປີ 2019 ຕາມທີ່ໄດ້ກໍານົດ, ເນື່ອງຈາກມີຄວາມຫຍຸ້ງຍາກ ຕ້ອງໄດ້ປະຕິບັດຕາມມາດຕະການຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງ ພະຍາດໂຄວິດ-19 ຢ່າງເຂັ້ມງວດ ແລະ ອົງການກວດກາແຫ່ງລັດ ຢູ່ໃນໄລຍະການປັບປຸງ ພາລະບົດບາດຂອງຕົນ, ສະເໜີໃຫ້ ເອົາຂັ້ນຄາເປົ້າໝາຍທີ່ບໍ່ທັນໄດ້ກວດກາເຂົ້າແຜນປີ 2022.

ມາດຕາ 2 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021

ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ອົງການກວດກາແຫ່ງລັດ ທີ່ໄດ້ເອົາໃຈໃສ່ ຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ຂອງຕົນ ໃນເງື່ອນໄຂສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແຜ່ລະບາດຂອງພະຍາດ ໂຄວິດ-19, ແຕ່ກໍສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ ເປັນຕົ້ນ: ໄດ້ຄົ້ນຄວ້າປັບປຸງພາລະບົດບາດຂອງ ຄະນະກວດກາສູນກາງພັກ, ອົງການກວດກາແຫ່ງລັດ ແລະ ພາລະບົດບາດຂອງຄະນະກວດກາກະຊວງ-ອົງການ ແລະ ທ້ອງຖິ່ນ, ຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍການກວດກາລັດ, ປັບປຸງຍຸດທະສາດດ້ານການຕໍ່ຕ້ານການສໍ້ລາດບັງຫຼວງ 5 ປີ (2021-2025), ໄດ້ອອກຄຳແນະນຳ ກ່ຽວກັບການແຈ້ງຊັບສິນຂອງພະນັກງານ ໃຫ້ບັນດາກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ, ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ 06 ໂຄງການ, ກວດກາຕາມຄຳສັ່ງ ແລະ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 4 ເປົ້າໝາຍ, ຄົ້ນຄວ້າຄຳຮ້ອງ-ການສະເໜີ ໄດ້ 17 ສະບັບ, ຕິດຕາມ ແລະ ຊຸກຍູ້ແກ້ໄຂຜົນການກວດກາ ໄດ້ 8 ເປົ້າໝາຍ ແລະ ສາມາດເກັບກູ້ເງິນຄືນໄດ້ 244,605 ຕື້ກີບ ແລະ 39,59 ພັນໂດລາສະຫະລັດ.

ແຕ່ເຖິງຢ່າງໃດກໍຕາມ, ກອງປະຊຸມເຫັນວ່າ ຍັງມີບາງດ້ານທີ່ຈະຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂ ເປັນຕົ້ນ: ການປັບປຸງກົດໝາຍວ່າດ້ວຍ ການກວດກາລັດ ຍັງຊັກຊ້າ ບໍ່ສຳເລັດຕາມແຜນການ, ການເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດຂອງຕົນ ບໍ່ທັນກວ້າງຂວາງ ແລະ ທົ່ວເຖິງ, ການດຳເນີນການກວດກາຕາມຜົນການກວດສອບ ແລະ ການແກ້ໄຂຜົນຂອງການກວດກາ ຍັງຊັກຊ້າແກ່ຍາວ ແລະ ບໍ່ຂາດຕົວ.

ມາດຕາ 3 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022

ກອງປະຊຸມ ເຫັນດີເປັນເອກະພາບຕໍ່ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງອົງການກວດກາແຫ່ງລັດ, ຊຶ່ງປະກອບມີ 4 ວຽກຈຸດສຸມ ແລະ 3 ມາດຕະການຈັດຕັ້ງປະຕິບັດ, ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນການດັ່ງກ່າວ ໃຫ້ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍ ກອງປະຊຸມສະເໜີໃຫ້ເອົາໃຈໃສ່ ດັ່ງນີ້:

1) ສືບຕໍ່ດຳເນີນການກວດກາ ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 14/ສພຊ, ວັນທີ 4 ພະຈິກ 2021, ຕາມການສະໜອງຂໍ້ມູນຂອງອົງການກວດສອບແຫ່ງລັດ ປີ 2019-2020 ຈຳນວນ 10 ເປົ້າໝາຍ ແລະ ເອົາໃຈໃສ່ຊຸກຍູ້ຕິດຕາມແກ້ໄຂຜົນການກວດກາທີ່ຍັງຄົງຄ້າງ ຈຳນວນ 10 ເປົ້າໝາຍ ໃຫ້ຂາດຕົວ;
2) ດຳເນີນການກວດກາ ຕາມແຜນປົກກະຕິ, ໂດຍສະເພາະ ຈະສຸມໃສ່ກວດກາໂຄງການລົງທຶນຂອງລັດ ທີ່ມີມູນຄ່າ 10 ຕື້ຂຶ້ນໄປ ຕາມແຈ້ງການ ສະບັບເລກທີ 130/ຫສນຍ ຈຳນວນ 446 ໂຄງການ ມູນຄ່າ 42.343,03 ຕື້ກີບ ໃຫ້ສຳເລັດ (ນອນຢູ່ໃນ 3.538 ໂຄງການ, ມູນຄ່າ 50.571,86 ຕື້ກີບ);
3) ຄົ້ນຄວ້າຮ່າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານກວດກາ ເພື່ອເປັນເຄື່ອງມືໃຫ້ແກ່ວຽກງານກວດກາ. ພ້ອມດຽວກັນນັ້ນ, ກໍໃຫ້ເອົາໃຈໃສ່ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດຂອງຕົນ ໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
4) ປັບປຸງກົນໄກການປະສານງານ ລະຫວ່າງ ອົງການກວດກາແຫ່ງລັດ ກັບ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມກົມກຽວ ແລະ ຄ່ອງຕົວຫຼາຍຂຶ້ນກວ່າເກົ່າ ໂດຍສະເພາະ

ການແລກປ່ຽນບົດຮຽນ, ການສະໜອງຂໍ້ມູນ ແລະ ເຂົ້າຮ່ວມແກ້ໄຂຜົນການກວດກາ ທີ່ຄ້າງຄາໃນໄລຍະຜ່ານມາໃຫ້ມີຜົນສຳເລັດຫຼາຍຂຶ້ນ;

5) ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ພະນັກງານ ຂອງອົງການກວດກາແຫ່ງລັດ ໃຫ້ມີຄວາມຮູ້ດ້ານວິຊາສະເພາະທີ່ໜັກແໜ້ນ ແລະ ແນ່ນອນ, ເປັນມືອາຊີບ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານກວດກາໃນໄລຍະໃໝ່ ໃຫ້ມີຜົນສຳເລັດ ແລະ ຄຸນນະພາບສູງກວ່າເກົ່າ;

6) ກອງປະຊຸມມອບໃຫ້ ອົງການກວດກາແຫ່ງລັດ ກວດກາເປົ້າໝາຍ ດັ່ງຕໍ່ໄປນີ້:

(1) ກວດກາການຍົກເວັ້ນ ພາສີ-ອາກອນ ກ່ຽວກັບການນຳເຂົ້ານ້ຳມັນເຊື້ອໄຟ;

(2) ກວດກາການນຳໃຊ້ບ່ວງເງິນຊົດເຊີຍຜູ້ໄດ້ຮັບຜົນກະທົບ ຈາກໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ;

(3) ກວດກາການປະຕິຮູບ ທະນາຄານທຸລະກິດລັດ ແລະ ວິສາຫະກິດລັດ.

## ມາດຕາ 4 ມາດຕະການ ຈັດຕັ້ງປະຕິບັດແຜນການເຄື່ອນໄຫວ ປະຈຳປີ 2022

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ຂອງອົງການກວດກາແຫ່ງລັດ ໃຫ້ໄດ້ຮັບຜົນສຳເລັດ ຕາມຈຸດປະສົງ ແລະ ລະດັບຄາດໝາຍ, ກອງປະຊຸມສະເໜີບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ມອບໃຫ້ ລັດຖະບານ:

- ເອົາໃຈໃສ່ຊີ້ນຳ ອົງການທີ່ຄຸ້ມຄອງເປົ້າໝາຍທີ່ຖືກກວດກາ ແກ້ໄຂຜົນການກວດກາຕາມຜົນການກວດສອບ ຕາມບົດສະຫຼຸບ ຜົນການກວດກາ ທີ່ໄດ້ຕົກລົງເອກະພາບ ແລະ ມີລາຍເຊັນຮ່ວມກັນແລ້ວ ໃຫ້ເຂັ້ມງວດ ແລະ ຂາດຕົວ;
- ຄົ້ນຄ້ວາ ແລະ ຊຸກຍູ້ກະຊວງກ່ຽວຂ້ອງ ຈັດສັນງົບປະມານ ຕາມການສະເໜີ ຂອງອົງການກວດກາແຫ່ງລັດ ຈຳນວນ 4,29 ຕື້ກີບ ໃຫ້ທັນເວລາ ພ້ອມທັງ ສະໜອງເຄື່ອງມື ແລະ ອຸປະກອນ ທີ່ຈຳເປັນ ໃຫ້ອົງການກວດກາແຫ່ງລັດ ເພື່ອ ຍົກສູງຄຸນນະພາບ, ເຕັກນິກ ແລະ ມາດຕະຖານຕ່າງໆ ຂອງວຽກງານກວດກາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
- ຊີ້ນຳຂະແໜງການສູນກາງ ແລະ ທ້ອງຖິ່ນ ໃຫ້ເອົາໃຈໃສ່ຮ່ວມມື, ປະສານສົມທົບ, ອຳນວຍຄວາມສະດວກ, ສະໜອງເອກະສານ, ຂໍ້ມູນທີ່ຈຳເປັນ ແລະ ເຂົ້າຮ່ວມວຽກງານກວດກາແຫ່ງລັດ ຢ່າງຕັ້ງໜ້າ.

2. ມອບໃຫ້ ອົງການກວດກາແຫ່ງລັດ:

- ເປັນເຈົ້າການຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX ໃຫ້ເປັນແຜນງານ, ໂຄງການ ແລະ ກິດຈະກຳ ຊີ້ນຳການຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ມີປະສິດທິຜົນ;
- ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ, ຈັນຍາບັນ, ຈັນຍາທຳ, ນ້ຳໃຈບໍລິສຸດ ສັດຊື່ ແລະ ນ້ຳໃຈຮັບໃຊ້ປະຊາຊົນ ຂອງພະນັກງານ ອົງການກວດກາແຫ່ງລັດ, ຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຢ່າງເຂັ້ມງວດ;
- ຄະນະນຳແຕ່ລະຂັ້ນ ຕ້ອງເພີ່ມທະວີການຊີ້ນຳ-ນຳພາ ຕໍ່ການເຄື່ອນໄຫວວຽກງານກວດກາລັດ, ຊຸກຍູ້, ຕິດຕາມກວດກາ, ສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນ ເປັນແຕ່ລະໄລຍະ ໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ;
- ເພີ່ມທະວີການຕິດຕາມ ແລະ ຊຸກຍູ້ ແກ້ໄຂຜົນການກວດກາຕາມຜົນການກວດສອບ ໃຫ້ເຂັ້ມງວດ, ຂາດຕົວ ແລະ ສຳເລັດໂດຍໄວ, ໃນກໍລະນີ ມີການລະເມີດທາງແພ່ງ ຫຼື ທາງອາຍາ ຕ້ອງສົ່ງສຳນວນ

ເອກະສານກວດກາ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຫຼື ອົງການໄອຍະການປະຊາຊົນ ຮ້ອງຟ້ອງຕໍ່ສານປະຊາຊົນ ຕາມກົດໝາຍວ່າດ້ວຍການກວດກາລັດ ມາດຕາ 23, 24 ແລະ 25.

3. ມອບໃຫ້ ອົງການກວດສອບແຫ່ງລັດ
   - ຄົ້ນຄວ້າຄືນບັນດາເປົ້າໝາຍຂອງຜົນການກວດສອບ ທີ່ຈະມອບໃຫ້ ອົງການກວດກາແຫ່ງລັດ ເພື່ອດຳເນີນການກວດກາ ໃຫ້ສອດຄ່ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການກວດກາແຫ່ງລັດ;
   - ສືບຕໍ່ປະສານງານສົມທົບ ກັບອົງການກວດກາແຫ່ງລັດ ໃຫ້ເລິກເຊິ່ງ, ມີຄວາມກົມກຽວ ແລະ ຄ່ອງຕົວ ຫຼາຍຂຶ້ນກວ່າເກົ່າ, ໂດຍສະເພາະ ການແລກປ່ຽນບົດຮຽນ, ການສະໜອງຂໍ້ມູນ ແລະ ເຂົ້າຮ່ວມແກ້ໄຂຜົນການກວດກາ ທີ່ຄ້າງຄາໃນໄລຍະຜ່ານມາໃຫ້ຂາດຕົວ ແລະ ສຳເລັດໂດຍໄວ.
4. ມອບໃຫ້ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ
   - ເພີ່ມທະວີການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຈຸດສຸມຂອງວຽກງານກວດກາແຫ່ງລັດ ແລະ ຊຸກຍູ້ການແກ້ໄຂຜົນການກວດກາຕາມຜົນການກວດສອບ ຢ່າງເຂັ້ມງວດ, ຂາດຕົວ ແລະ ສຳເລັດໂດຍໄວ;
   - ຕິດຕາມ, ກວດກາ ຄວາມສອດຄ່ອງ ແລະ ຄວາມສັກສິດໃນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບວຽກງານກວດກາ ພ້ອມທັງຊຸກຍູ້ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານກວດກາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ.

ມາດຕາ 5 ການຈັດຕັ້ງປະຕິບັດ

1. ມອບໃຫ້ ອົງການກວດກາແຫ່ງລັດ ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ລັດຖະບານຊີ້ນຳບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
3. ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

ມາດຕາ 6 ຜົນສັກສິດ

ມະຕິ ສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**